ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທ່ານ ນາງ ສາຍສະໝອນ ຈັນທະຈັກ ເປັນຜູ້ອຳນວຍການ ຕລຊລ ຄົນໃໝ່



ໃນວັນທີ 10 ກັນຍາ 2021, ທ່ານ ນາງ ສາຍສະໝອນ ຈັນທະຈັກ ໄດ້ຮັບການແຕ່ງຕັ້ງເປັນຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ (ຕລຊລ) ຜູ້ໃໝ່ແທນ ທ່ານ ອ໊ອດ ພົນຊຽງດີ ອະດີດຜູ້ອຳນວຍການໃຫຍ່ ຕລຊລ.

ທ່ານ ນາງ ສາຍສະໝອນ ຈັນທະຈັກ ໄດ້ເລີ່ມເຮັດວຽກເປັນວິຊາການ ຢູ່ທະນາຄານແຫ່ງ ສປປ ລາວ (ທຫລ) ຫຼັງຈາກຈົບການສຶກສາຈາກມະຫາວິທະຍາໄລ ຄູບານ ທີ່ສະຫະພັນ ຣັດເຊຍ (ອະດີດ ໂຊວຽດ) ໃນປີ 1993 ແລະ ໃນປີ 2000, ໄດ້ຖືກແຕ່ງຕັ້ງຂຶ້ນເປັນຫົວໜ້າພະແນກຢູ່ສຳນັກງານປົກປ້ອງເງິນຝາກ, ທຫລ; ໃນລະຫວ່າງ ປີ 2003-2005 ເປັນຜູ້ຊ່ວຍຊ່ຽວຊານທີ່ປຶກສາດ້ານການທະນາຄານສາກົນໃນການປັບປຸງໂຄງສ້າງຂອງທະນາຄານພັດທະນາລາວ. ຫຼັງຈາກນັ້ນ, ໄດ້ຍົກຍ້າຍມາປະຈຳການຢູ່ກົມນະໂຍບາຍເງິນຕາ, ທຫລ ໃນປີ 2007 ແລະ ຖືກແຕ່ງຕັ້ງເປັນຮອງຫົວໜ້າກົມນະໂຍບາຍເງິນຕາ ໃນປີ 2009 ຮັບຜິດຊອບກ່ຽວກັບການວິເຄາະເງິນຕາ ແລະ ການຈັດຕັ້ງປະຕິບັດນະໂຍບາຍອັດຕາແລກປ່ຽນ, ຄວບຄຸມການສະໜອງເງິນໃນລະບົບເສດຖະກິດ ຜ່ານການກຳນົດເງິນແຮຝາກບັງຄັບ ແລະ ຕິດຕາມການພັດທະນາຂອງຕະຫຼາດເງິນທັງ ພາຍໃນ ແລະ ຕ່າງປະເທດ.

ນັບແຕ່ປີ 2010, ທ່ານໄດ້ເລີ່ມເຮັດວຽກໃນຕະຫຼາດທຶນ ດ້ວຍການດຳລົງຕຳແໜ່ງເປັນຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ແລະ ຮັບຜິດຊອບຊີ້ນຳ-ນຳພາພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ພະແນກຄຸ້ມຄອງຕະຫຼາດຫຼັກຊັບ; ໃນປີ 2014, ທ່ານໄດ້ຖືກແຕ່ງຕັ້ງ ເປັນຮັກສາການຫົວໜ້າສຳນັກງານ ຄຄຊ ແລະ ໄດ້ຖືກແຕ່ງຕັ້ງເປັນຫົວໜ້າສຳນັກງານ ຄຄຊ ນັບແຕ່ປີ 2015 ເປັນຕົ້ນມາ.

ທ່ານນາງ ສາຍສະໝອນ ຈັນທະຈັກ ໄດ້ສຳເລັດການສຶກສາລະດັບປະລິນຍາໂທ ສາຂາເສດຖະສາດ ຈາກມະຫາວິທະຍາ ໄລ ຄູບານ ປະເທດ ຣັດເຊຍ (ອະດີດ ໂຊວຽດ) ໃນປີ 1993; ປະລິນຍາໂທ ສາຂາ ນະໂຍບາຍສາທາລະນະ ຈາກມະຫາວິທະຍາໄລ ໄຊຕາມະ ປະເທດ ຍີ່ປຸ່ນ ໃນປີ 1998 ແລະ ລະດັບປະລິນຍາໂທ ສາຂາ ການບໍລິຫານທຸລະກິດສາກົນ ຈາກມະຫາວິທະຍາໄລ ຟຣີນເດີ ປະເທດ ອິດສະຕາລີ ໃນປີ 2006. ນອກຈາກນັ້ນ, ທ່ານຍັງເປັນສະມາຊິກຜູ້ກວດສອບບັນຊີຂອງປະເທດ ອິດສະຕາລີ ຕັ້ງແຕ່ປີ 2015 ເປັນຕົ້ນມາ.

**# ຂ່າວ: ຣັດສະໝີ ດວງສັດຈະ**

## ໃຊ້ເງິນກີບທົ່ວທັງຊາດ ສ້າງປັດບາດຄ່າເງິນລາວ